# ບົດທີ 3

# ໂຢຮັນບັບຕິສະໂຕປະກາດໃຫ້ຄົນຖິ້ມໃຈເກົ່າເອົາໃຈໃໝ່




ໃນບົດຮຽນນີ້ ເຮົາຈະຮຽນຮູ້ເລື່ອງການປະກາດຂອງໂຢຮັນບັບຕິສະໂຕ ມີຜູ້ທຳນວາຍເລື່ອງເພິ່ນ 700 ປີ ກ່ອນ ຄ.ສກ່ອນຈະຕັ້ງຕົ້ນຮຽນຢ່າລືມອ້ອນວອນຂໍໃຫ້ພະເຈົ້າຊ່ວຍ. ຫຼັງຈາກນັ້ນຈົ່ງອ່ານ ມັດທາຍ 3:1-6 ຢ່າງໜ້ອຍ 6 ເທື່ອ ຫຼັງຈາກອ່ານໄປແລ້ວໃຫ້ຕອບຄຳຖາມຕໍ່ໄປໄດ້.


ແຂວງ ~ ປ
ແຂວງ ~ ຢ
ບ
ບ
ປາແລັດສະຕິນ

**1** ທ່ານຈື່ໄດ້ບໍ່ວ່າ ມັດທາຍລາຍງານເຫດການຈັກປະການໃນສະໄໝປີທີ່ພະເຢຊູຕຽມຕົວ?

____________________________________________________________

ປະການແລກນັ້ນແມ່ນປະການໃດ? ____________________________________

**2** ຂ່າວປະເສີດສາມເຫຼັ້ມແລກເລີ້ມຕົ້ນລາຍງານສະໄໝປີທີ່ຕຽມຕົວໂດຍການເທດສະໜາຂອງໂຢຮັນບັບຕິສະໂຕ.

ກ. ໃນແຜນທີ່ນັ້ນແມ່ນຕົວອັກສອນໃດ ທີ່ໝາຍບ່ອນໂຢຮັນໃຫ້ເຂົ້າຮັບບັບຕິສະມາ? _____

ຂ. ແມ່ນຕົວອັກສອນໃດ ທີ່ໝາຍແຂວງຢູດາ? ____________________________

ຄ. ແມ່ນຕົວອັກສອນໃດ ທີ່ໝາຍແຂວງເປີເລຍ? ___________________________

**3** ໂຢຮັນບັບຕິສະໂຕເປັນຜູ້ຮັບໃຊ້ໄປກ່ອນໜ້າພະເຢຊູ ມີຜູ້ທຳນວາຍໃນພະຄຳພີເດີມຄົນໜຶ່ງຊຶ່ງໄດ້ທຳນວາຍ 700 ປີ ກ່ອນ ຄ.ສ. ຜູ້ທຳນວາຍຄົນນັ້ນແມ່ນໃຜ? (ມທ 3:3) __________

**4** ຕາມຄຳທຳນວາຍນັ້ນຜູ້ຮັບໃຊ້ທີ່ມາກ່ອນໜ້າພະອົງຈະເທດສະໜາຢູ່ບ່ອນໃດ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ໃນພະລາຊະວັງ ຂ. ໃນປ່າ ຄ. ໃນເມືອງ

**5** ກ. ໂຢຮັນບັບຕິສະໂຕ ປະກາດຢູ່ໃສ? (ອ່ານ ມທ 3:1) _______________________

ຂ. ແມ່ນຜູ້ທຳນວາຍໃດ ທີ່ບອກເລື່ອງຂອງໂຢຮັນບັບຕິສະໂຕ? ____________________

**6** ມີຄຳທຳນວາຍຫຼາຍຢ່າງທີ່ປະກາດເລື່ອງພະກຳເນີດຂອງພະເຢຊູ. (ໃຫ້ທ່ານໝາຍໄວ້ດ້ວຍ ໃສ່ຄຳທຳນວາຍໃດ ທີ່ມາທາງເອຊາຢາ)

______ ກ. ຈະເກີດຈາກຍິງພົມມະຈາລີ

______ ຂ. ຊື່ “ເອມານູເອນ”

______ ຄ. ຈະກຳເນີດໃນບ້ານເບດເລເຮັມ

______ ງ. “ເດັກນ້ອຍຜູ້ໜຶ່ງໄດ້ເກີດມາໃຫ້ເຮົາແລ້ວ”

______ ຈ. ດວງດາວ

______ ສ. ຈະມີຜູ້ຮັບໃຊ້ໄປກ່ອນໜ້າພະອົງ

ຕອບ:

**1** *ສາມ ປະການ ການເທດສະໜາຂອງໂຢຮັນບັບຕິສະໂຕ*

**2** *ກ. ອັກສອນ ບ ຂ. ແຂວງ ຢ ຄ. ແຂວງ ປ*

**3** *ເອຊາຢາ*

**4** *ຂ.ຖືກ*

**5** *ກ. ປ່າ ຂ. ເອຊາຢາ*

**6** *ກ. ຂ. ງ. ແລະ ສ. ຖືກ*

**7** ຈົ່ງອ່ານ ມທ 3:1-2 ໂຢຮັນບັບຕິສະໂຕ ເວົ້າເຖິງຫຍັງທີ່ໄດ້ມາໃກ້ແລ້ວ? ____________

**8** ໃນມທ 3:2 ໂຢຮັນປະກາດວ່າ ຈົ່ງເຮັດຢ່າງໃດ? ____________________________

*ການຖິ້ມໃຈເກົ່າເອົາໃຈໃໝ່ແປວ່າ ເຮົາຈະປ່ຽນແນວຄິດຈິດໃຈທີ່ເຕັມດ້ວຍຄວາມບາບ.*

**9** ກ. ໃຫ້ອ່ານ ໂລມ 6:12 ແມ່ນສິ່ງໃດທີ່ປົກຄອງຄົນທີ່ບໍ່ຖິ້ມໃຈເກົ່າເອົາໃຈໃໝ່? ________

ຂ. ດັ່ງນັ້ນໃນການຖິ້ມໃຈເກົ່າເອົາໃຈໃໝ່ເຮົາຈະປ່ຽນທ່າທີກ່ຽວກັບສິ່ງໃດ? __________

ຄ. ຈົ່ງອ່ານ ໂລມ 5:21 ແມ່ນໃຜມາຄອບງຳໃນຈິດໃຈຂອງຄົນທີ່ຖິ້ມໃຈເກົ່າເອົາໃຈໃໝ່ ແລ້ວ? ____________________________________________________

| ຈົ່ງເອົາສໍສີແດງຂີດກ້ອງຄຳທີ່ວ່າ “ລາຊະອານາຈັກສະຫວັນ” ໃນ ມທ 3:2 |
|---|

**10** ຄົນໃດທີ່ໄດ້ປ່ຽນທ່າທີຂອງຕົນຕໍ່ສູ້ຄວາມຜິດບາບ ຄົນນັ້ນໄດ້ຖິ້ມຫຍັງ? ____________

**11** ໂຢຮັນບັບຕິສະໂຕ ບອກວ່າ ຈົ່ງ ____________________________________ ເພາະລາຊະອານາຈັກສະຫວັນມາໃກ້ແລ້ວ. (ຈົ່ງຕື່ມຄວາມໃສ່ບ່ອນວ່າງ)

**12** ຄົນໃດທີ່ຈະມີສ່ວນໃນລາຊະອານາຈັກສະຫວັນ (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ຕ້ອງຖິ້ມໃຈເກົ່າເອົາໃຈໃໝ່

ຂ. ຖິ້ມໃຈເກົ່າເອົາໃຈໃໝ່ກໍໄດ້ ຫຼື ບໍ່ຖິ້ມກໍໄດ້ຕາມໃຈມັກ

ຄ. ເຂົ້າຮ່ວມຊຸມນຸມທຸກວັນອາທິດກໍໄດ້

**13** ຄຳວ່າ “ຖິ້ມໃຈເກົ່າເອົາໃຈໃໝ່” ແປວ່າຫຍັງ? _____________________________

ຕອບ:

***7*** *ລາຊະອານາຈັກສະຫວັນ*

***8*** *ຈົ່ງຖິ້ມໃຈເກົ່າເອົາໃຈໃໝ່*

***9*** *ກ. ຜິດບາບ ຂ. ຜິດບາບ ຄ. ພະເຢຊູ*

***10*** *ຖິ້ມໃຈເກົ່າເອົາໃຈໃໝ່*

***11*** *ຖິ້ມໃຈເກົ່າເອົາໃຈໃໝ່*

***12*** *ກ.ຖືກ*

***13*** *ປ່ຽນທ່າທີຕໍ່ຄວາມຜິດບາບ*

**14** ຮູບກາຕູນຕໍ່ໄປນີ້ ສະແດງບາດກ້າວ 5 ປະການໃນການຖິ້ມໃຈເກົ່າເອົາໃຈໃໝ່. ໃຫ້ທ່ານເບິ່ງຮູບແລະເບິ່ງຫົວຂໍ້ຕໍ່ ໄປນີ້ ແລ້ວເອົາຫົວຂໍ້ເຫຼົ່ານີ້ໄປເຂົ້າກັບຮູບຕາມທີ່ເໝາະສົມ:

*ໂສກເສົ້າເພາະບາບ* *ຄວາມຈອງຫອງ* *ຟັງພະທຳຂອງພະເຈົ້າ*
*ປະບາບມາຫາຊີວິດໃໝ່* *ຮັບຮູ້ຕົວເອງເປັນຄົນບາບ*




**15** ການຖິ້ມໃຈເກົ່າເອົາໃຈໃໝ່ເປັນປະສົບປະການຂ້າງໃນທີ່ບໍ່ມີໃຜເຫັນກັບຕາໄດ້. ແຕ່ເພື່ອຈະມີສັນຍາລັກຢ່າງໜຶ່ງທີ່ ຄົນເຫັນກັບຕາໄດ້ ໂຢຮັນບັບຕິສະໂຕໄດ້ສະເໜີວິທີການໄວ້ດັ່ງນີ້:

ກ. ອ່ານ ມທ 3:6 ເຂົາຮັບພິທີຫຍັງ? ______________________

ຂ. ຜູ້ທີ່ຖິ້ມໃຈເກົ່າເອົາໃຈໃໝ່ຕ້ອງຮັບສາລະພາບຫຍັງກ່ອນຈະຮັບບັບຕິສະມາ? ______

**16** ການຮັບສາລະພາບຜິດບາບໝາຍຄວາມວ່າຢ່າງໃດ? (ໃຫ້ໝາຍເອົາຂໍ້ທີ່ຖືກ)

ກ. ໜ້າເສຍດາຍທີ່ເຊື່ອງຄວາມບາບຈາກຕາຜູ້ອື່ນບໍ່ໄດ້

ຂ. ຍອມຮັບບາບທີ່ເຄີຍເຮັດມາ

ຄ. ຊີ້ບອກຄວາມຜິດຂອງຜູ້ອື່ນແລ້ວສະເໜີມາ

**17** ຄົນທີ່ຮັບບັບຕິສະມາຈາກໂຢຮັນເຄີຍໄດ້ປ່ຽນທ່າທີຕໍ່ຫຍັງ? ______________________

ຕອບ:

***14*** *ກ. ຄວາມຈອງຫອງ* *ຂ. ຟັງພະທຳຂອງພະເຈາ* *ຄ. ຮັບຮູ້ຕົວເອງເປັນຄົນບາບ*
*ງ. ໂສກເສາເພາະບາບ* *ຈ. ປະບາບມາຫາຊີວິດໃໝ່*

***15*** *ກ. ບັບຕິສະມາ* *ຂ. ຜິດບາບ*

***16*** *ຂ.ຖືກ*

***17*** *ຕໍ່ຄວາມຜິດບາບ*

**18** ການຖິ້ມໃຈເກົ່າເອົາໃຈໃໝ່ໝາຍຄວາມວ່າຢ່າງໃດ? ____________________

**19** ການຖິ້ມໃຈເກົ່າເອົາໃຈໃໝ່ ເພິ່ນເຮັດຢ່າງໃດກັບບາບ? (ໃຫ້ໝາຍເອົາຂໍ້ທີ່ເຫັນວ່າຖືກ)

ກ. ປິດບັງຄວາມຜິດບາບໄວ້ ຄ. ເສົ້າໃຈໃນບາບ

ຂ. ມ່ວນຊື່ນໃນບາບ ງ. ຮັບສາລະພາບບາບ

**20** ເມື່ອຄົນໃດຖິ້ມໃຈເກົ່າເອົາໃຈໃໝ່ເພິ່ນເຮັດຫຍັງກັບຄວາມຜິດບາບ? ____________

**21** ຈົ່ງອ່ານ ກິດຈະການ 22:16 ພິທີຮັບບັບຕິສະມາເປັນສັນຍາລັກທີ່ເຫັນກັບຕາໄດ້ ຊຶ່ງໝາຍຄວາມວ່າ ຜູ້ກ່ຽວນັ້ນໄດ້ ປ່ຽນທ່າທີ່ຕໍ່ຄວາມຜິດບາບ. ເມື່ອບຸກຄົນໃດຄົນນຶ່ງຖິ້ມໃຈເກົ່າເອົາໃຈໃໝ່ເພິ່ນຮັບສາລະພາບຫຍັງ? ____________________

ພະເຈົ້າ ຊົງຊໍາລະໃຈເຮົາຈາກຫຍັງ? ____________________

**22** ກ. ຖ້າວ່າຢາກມີສ່ວນໃນອານາຈັກສະຫວັນ ມີສິ່ງໃດທີ່ຕ້ອງການປ່ຽນຂ້າງໃນ? ________

ຂ. ເຫດການນັ້ນຈຶ່ງຈະສະແດງອອກໄປຂ້າງນອກໂດຍສັນຍາລັກໃດ? ____________

**23** ມີສອງຈໍາພວກໃດທີ່ຮັບສົນບັບຕິສະມາຈາກໂຢຮັນໃນ ມທ 3:7?

____________________ ແລະ ____________________

**24** ບົດຮຽນຕໍ່ໄປນີ້ ເຮົາຈະເຫັນວ່າທີ່ຈິງພວກຟາລິຊາຍແລະພວກຊາດູກາຍບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃໝ່ທັງໝົດ. ຄົນຮັບບັບຕິສະມາແຕ່ບໍ່ຖິ້ມໃຈເກົ່າເອົາໃຈໃໝ່ມີບໍ່? ____________

**25** ຕາມຄໍາເທດສະໜາຂອງໂຢຮັນບັບຕິສະໂຕຈະຕ້ອງຮັບສົນບັບຕິສະມາ ຫຼືຈະຕ້ອງຖິ້ມໃຈເກົ່າເອົາໃຈໃໝ່ຈຶ່ງຈະເຂົ້າ ໃນອານາຈັກສະຫວັນໄດ້? ____________________

**26** ຕາມ ມັດທາຍ 3:8 ມີສັນຍາລັກປະການອື່ນອີກດ້ວຍ ທີ່ເຫັນກັບຕາຊຶ່ງສະແດງການຖິ້ມໃຈເກົ່າເອົາໃຈໃໝ່ ສັນຍາ ລັກນັ້ນຄືຫຍັງ? ____________________

ຕອບ:

**18** *ປ່ຽນທ່າທີຕໍ່ຄວາມຜິດບາບ*

**19** *ງ. ຖືກ*

**20** *ເພິ່ນຮັບສາລະພາບຜິດບາບແລ້ວປະຖິ້ມ*

**21** *ຄວາມຜິດບາບ ຜິດບາບ*

**22** *ກ. ທ່າທີຕໍ່ຄວາມຜິດບາບ* *ຂ. ບັບຕິສະມາ*

**23** *ຟາລິຊາຍ ແລະຊາດູກາຍ*

**24** *ມີຢູ່*

**25** *ຕ້ອງຖິ້ມໃຈເກົ່າເອົາໃຈໃໝ່*

**26** *ການປະຕິບັດໃຫ້ໄດ້ຜົນ*

**27** ໃນມທ 3:10 ແມ່ນເພາະເຫດໃດ ໄມ້ນັ້ນຈະຖືກປ້ຳແລ້ວໂຍນຖິ້ມໃສ່ໄຟເສຍ? ________

**28** ຖ້າຢ່າງນັ້ນຄົນໃດທີ່ບໍ່ສະແດງຜົນອອກມາໃນຊີວິດ ໝາຍຄວາມວ່າຄົນນັ້ນບໍ່ໄດ້ຖິ້ມຫຍັງ?

________________________________________________________________

**29** ເຊັ່ນດຽວກັນຄົນໃດທີ່ເກີດຜົນດີໃນຊີວິດ ຜົນນັ້ນຈະເປັນຫຼັກຖານວ່າ ຄົນນັ້ນໄດ້ຖິ້ມຫຍັງ?

________________________________________________________________

**30** ກ. ສັນຍາລັກກ່ຽວກັບຄົນຖິ້ມໃຈເກົ່າເອົາໃຈໃໝ່ມີ 2 ປະການໃດ?

ຕາມ ມທ 3:6 ____________________________________________

ຕາມ ມທ 3:8 ____________________________________________

ຂ. ໃນສັນຍາລັກສອງປະການນັ້ນ ແມ່ນປະການໃດທີ່ແນ່ນອນ? ________________

**31** ໃຫ້ອ່ານ ໂຢຮັນ 15:5 ຜູ້ທີ່ເຂົ້າສະໜິດກັບພະເຢຊູ ແລະພະເຢຊູເຂົ້າສະໜິດກັບຄົນນັ້ນຈະເກີດມີຫຍັງ? ____________________________________________________

**32** ກ. ໃຫ້ອ່ານ ມທ 3:11 ໂຢຮັນໃຫ້ເຂົາຮັບບັບຕິສະມາດ້ວຍຫຍັງ? ________________

ຂ. ພະເຢຊູໃຫ້ຮັບບັບຕິສະມາໂດຍຫຍັງ? ________________________________

**33** ຖ້າເຮົາມີພະວິນຍານ ເຮົາຈະມີຜົນຂອງໃຜ? ________________________________

**34** ແມ່ນບັບຕິສະມາໃດທີ່ໃຫ້ເກີດມີຜົນໃນຊີວິດ ແມ່ນການບັບຕິສະມາດ້ວຍນ້ຳ ຫຼືພະວິນຍານ?

________________________________________________________________

**35** ແມ່ນໃຜໃຫ້ເຮົາຮັບບັບຕິສະມາໂດຍພະວິນຍານບໍລິສຸດ? ______________________

ຕອບ:

***27*** *ບໍ່ເກີດຜົນດີ*

***28*** *ບໍ່ໄດ້ຖິ້ມໃຈເກົ່າເອົາໃຈໃໝ່*

***29*** *ໄດ້ຖິ້ມໃຈເກົ່າເອົາໃຈໃໝ່*

***30*** *ກ. ຮັບບັບຕິສະມາປະຕິບັດໃຫ້ໄດ້ຜົນ* *ຂ. ປະຕິບັດໃຫ້ໄດ້ຜົນ*

***31*** *ມີຜົນ*

***32*** *ກ. ນ້ຳ* *ຂ. ພະວິນຍານບໍລິສຸດ*

***33*** *ຜົນຂອງພະວິນຍານ*

***34*** *ໂດຍພະວິນຍານ*

***35*** *ພະເຢຊູຄຣິດ*

*ໃຫ້ທ່ານກັບໄປເບິ່ງຮູບກາຕູນທີ່ຢູ່ໃນຄຳຖາມ 14 ມີບາງຄົນທີ່ຄິດວ່າ ມາເຖິງຮູບທີ 3 ແລ້ວກໍແລ້ວໄປ ແຕ່ຄົນທີ່ຖິ້ມໃຈເກົ່າເອົາໃຈໃຫມ່ແທ້ ຈະປະບາບແລ້ວສະແດງຜົນຂອງພະວິນຍານບໍລິສຸດໃນຊີວິດອີກດ້ວຍ. ໃຫ້ທ່ານຈື່ງຈື່ແຕ່ລະບາດກ້າວເພື່ອໃນໂອກາດຫນ້າທ່ານຈະບອກໃຫ້ຜູ້ອື່ນໄດ້. ມີຄົນທີ່ຖິ້ມໃຈເກົ່າເອົາໃຈໃຫມ່ທີ່ບໍ່ເຕັມສ່ວນບໍ່? ທ່ານເຄີຍຮູ້ຈັກຄົນຢ່າງນັ້ນບໍ່? ເຄີຍພົບໃນພະຄຳພີບໍ່? ເຄີຍພົບຄົນທີ່ຖິ້ມໃຈເກົ່າເອົາໃຈໃຫມ່ຢ່າງສົມບູນບໍ່? ໃຫ້ທ່ານຕຽມຕົວແລະປ່ງນຄວາມຄິດຄວາມເຫັນເລື່ອງນີ້ໃນປະຊຸມ.*

---

*ໃຫ້ທ່ານກັບໄປເບິ່ງຮູບກາຕູນ ທີ່ຕໍ່ຈາກຄຳຖາມ 14 ອີກເທື່ອຫນຶ່ງ ໃຫ້ທ່ານຮັບພິຈາລະນາບັນຫາຕໍ່ໄປນີ້ ເພື່ອອາດຈະຮ່ວມປຶກສາຫາລືກັນໃນປະຊຸມ.*

1. ຫຼາຍຄົນຄິດວ່າການຖິ້ມໃຈເກົ່າເອົາໃຈໃຫມ່ ເປັນແຕ່ໃນຮູບ ຄ. ທ່ານຮຽນຮູ້ມາແລ້ວຢ່າງໃດ? ພໍບໍ່?
2. ຄົນໃດທີ່ຜ່ານຮູບ ກ. ຂ. ແລະ ຄ. ແຕ່ບໍ່ໄດ້ປະຄວາມບາບໄປ ບໍ່ສະແດງຜົນຂອງພະວິນຍານ ຄົນນັ້ນຖິ້ມໃຈ ເກົ່າເອົາໃຈໃຫມ່ແທ້ບໍ່?
3. ໃຫ້ທ່ານທ່ອງຂຶ້ນໃຈບາດກ້າວ 4 ປະການທີ່ຕິດຢູ່ກັບຮູບ ຂ. ຄ. ງ. ແລະ ຈ. ນັ້ນ, ເພື່ອຈະສາມາດເລົ່າ ໃຫ້ຜູ້ອື່ນຟັງ ຖ້າທ່ານແຕ້ມຮູບເປັນ ຂໍໃຫ້ຝຶກແຕ້ມຮູບທັງ 5 ໃບນັ້ນ ຫຼືອາດຈະໃຊ້ກະດານດຳກໍໄດ້.
4. ທີ່ຈະຜ່ານຈາກ ຮູບ ກ. ໄປຫາ ຮູບ ງ. ໂດຍຫຼີກເວັ້ນ ຮູບ ຂ. ແລະ ຄ. ໄດ້ບໍ່? ເປັນຫຍັງບໍ່ໄດ້?
5. ທ່ານເຄີຍຮູ້ຄົນທີ່ຖິ້ມໃຈເກົ່າເອົາໃຈໃຫມ່ບໍ່ເຕັມສ່ວນບໍ່? ມີຄົນຢ່າງນັ້ນໃນພະຄຳພີບໍ່? ການຖິ້ມໃຈເກົ່າເອົາໃຈໃຫມ່ແທ້ ປາກົດມາຢ່າງໃດ? (ໃຫ້ປຶກສາຫາລືກັນກັບຫມູ່ໃນປະຊຸມ)

*ຢ່າລືມເສັງບົດທີ 3!*